# ບົດເສັງສຸດທ້າຍ ໂປໂລ 2

**ຊື່** ______________________

1. ກ. ເທື່ອທີສອງນີ້ແມ່ນໃຜ ເດີນທາງກັບໂປໂລ ແທນບາລະນາບາ? ________________
   ຂ. ຄົນໃໝ່ນີ້ ມາຈາກຄຼິດສະຕະຈັກໃດ? ________________
   ຄ. ບາລະນາບາບໍ່ໄດ້ໄປນຳ ເພາະເຂົາບໍ່ເຫັນດີກັນເລື່ອງໃຜ? ________________
2. ກ. ອີກຜູ້ໜຶ່ງ ມາຮ່ວມກັບເຂົາຕັ້ງແຕ່ຄາລາເຕຍໄປ ຄື ໃຜ? ________________
   ຂ. ໂປໂລ ໃຫ້ເພິ່ນຮັບພິທີໃດ? ________________
   ຄ. ເປັນຫຍັງຈຶ່ງໃຫ້ຮັບ? ________________

   ________________
   ງ. ເລື່ອງນີ້ ເກີດຂຶ້ນໃນເມືອງໃດ? ________________
3. ໂປໂລໄປປະກາດຂ່າວປະເສີດ ໃນບ່ອນໃໝ່ 5 ບ່ອນ ໃນເທື່ອທີສອງນີ້ ຕາມແຜນທີ່ຕໍ່ໄປນີ້:




   ອັກສອນ " ຮ " ອ້າງເຖິງເມືອງໃດ? ________________
   ອັກສອນ " ຢ " ອ້າງເຖິງເມືອງໃດ? ________________
   ອັກສອນ " ຟ " ອ້າງເຖິງເມືອງໃດ? ________________
   ອັກສອນ " ມ " ອ້າງເຖິງເມືອງໃດ? ________________
   ອັກສອນ " ລ " ອ້າງເຖິງເມືອງໃດ? ________________
4. ກ. ອີກຄົນໜຶ່ງ (ຄົນທີ 3) ທີ່ເດີນທາງຮ່ວມກັບໂປໂລ ຄື ໃຜ? ________________
   ຂ. ເຂົາຮ່ວມຕັ້ງແຕ່ເມືອງໃດ? ________________
   ຄ. ອັກສອນໃດ ໃນແຜນທີ່ໝາຍເມືອງນັ້ນໄວ້? ________________
   ງ. ຄົນນັ້ນຫາລ້ຽງຊີບຢ່າງໃດ? ________________
   ຈ. ໃນເມືອງດຽວກັນນັ້ນ ພະອົງໜຸນໃຈໂປໂລໂດຍການໃດ? ________________

5. ກ. ມີສາມຄົນໃດໃນເມືອງຟີລິບປອຍຊຶ່ງຊີວິດຂອງເຂົາປ່ຽນແປງຫຼາຍໃນເວລາໂປໂລປະກາດພະທຳ? ______________________________

ຂ. ແມ່ນຄົນໃດທີ່ບໍ່ໄດ້ເດີນທາງກັບໂປໂລຕໍ່ ແຕ່ຢູ່ຮັກສາຄຼິດສະຕຽນໃໝ່ໃນ ຟີລິບປອຍກ່ວາ 7 ປີ? ______________________________

ຄ. ເລື່ອງນີ້ເຮົາຮູ້ໄດ້ຢ່າງໃດ? ______________________________

6. ກ. ໂປໂລຕ້ອງໜີຈາກຄົນຢິວໃນເມືອງເບຣອຍອາ. ພີ່ນ້ອງຈາກຄຼິດສະຕະຈັກນັ້ນ ເດີນທາງໄປນຳ ໂປໂລ ເຖິງໃສ? ______________________________

ຂ. ພີ່ນ້ອງໃນເບຣອຍອາ ມີຊື່ສຽງດີເພາະເຂົາຄົ້ນເບິ່ງຫຍັງ? ______________________________

ຄ. ແມ່ນໃຜທີ່ຍັງຢູ່ໃນເບຣອຍອາ ຫຼັງຈາກໂປໂລອອກໄປແລ້ວ? ______________________________

ງ. ໂປໂລໄປເຖິງເມືອງໃດ ພວກເຂົາຈຶ່ງມາຮ່ວມກັບເພິ່ນອີກ? ______________________________

ຈ. ເຂົາແວ່ເມືອງໃດ ໃນແຂວງມາເກໂດເນຍຖາມຂ່າວເລື່ອງພີ່ນ້ອງ ກ່ອນຈະກັບຮ່ວມກັບໂປໂລອີກ? ______________________________

ສ. ຈົດໝາຍສະບັບໃດ ກ່າວເລື່ອງນີ້? ______________________________

7. ເມື່ອຢູ່ກຸງອາແຖນ ໂປໂລ ມີໂອກາດປະກາດພະທຳໃນສາມບ່ອນໃດ? ______________________________ ______________________________ ແລະ ______________________________

8. ໂປໂລເຫັນຫຍັງໃນກຸງອາແຖນ ທີ່ເຮັດໃຫ້ເພິ່ນເດືອດຮ້ອນເຄືອງໃຈ? ______________________________

9. ໃຫ້ທ່ານຈົດຊື່ຜູ້ໜຶ່ງໃນກຸງອາແຖນທີ່ຮັບເຊື່ອ? ______________________________

10. ກ. ມີສອງຄົນໃດ ທີ່ຮ່ວມເຮັດອາຊີບດຽວກັນກັບໂປໂລໃນເມືອງໂກລິນໂທ? ______________________________

ຂ. ອາຊີບໃດ? ______________________________

ຄ. ເຂົາຍ້າຍຈາກໃສມາ? ______________________________

ງ. ແມ່ນໃຜໄລ່ເຂົາອອກຈາກບ່ອນນັ້ນ? ______________________________

ຈ. ເປັນຫຍັງຈຶ່ງໄລ່ເຂົາອອກ? ______________________________

11. ກ. ເມື່ອຢູ່ໃນເມືອງໂກລິນໂທ ໂປໂລເທດສະໜາໃນເຮືອນຂອງໃຜຈຶ່ງຈະໃຫ້ຄົນຕ່າງຊາດຟັງ?

______________________________

ຂ. ເມື່ອຊີລາກັບຕີໂມທຽວມາເຖິງແຂວງອະຂາຢາ ເບິ່ງຄືເຂົາຊ່ວຍໂປໂລໂດຍເຮັດພິທີໃດ?

______________________________

ຄ. ເຂົາເອົາຂ່າວດີຈາກຄຼິດສະຕະຈັກໃດ ໃນແຂວງມາເກໂດເນຍຈຶ່ງເຮັດໃຫ້ໂປໂລຂຽນຈົດໝາຍ? ______________________________

12. ກ. ໃນເມືອງໂກລິນໂທມີພະທຽມສຳຄັນສອງອີງ. ໃຫ້ບອກຊື່ຂອງອີງທີໜຶ່ງ? ______________________________

ຂ. ພະທັງສອງອີງນັ້ນ ມີສ່ວນກ່ຽວກັບບາບດ້ານໃດເປັນຕົ້ນ? ______________________________

ຄ. ໃນພະທຳໃດທີ່ໂປໂລສອນວ່າເຮົາຄວນຮັກສາຮ່າງກາຍຂອງເຮົາໄວ້ເພື່ອພະເຈົ້າ?

______________________________

13.ໂປໂລເຫັນຫຍັງໃນເມືອງໂກລິນໂທ ທີ່ໜຸນໃຈໃຫ້ກ່າວພະທຳຕໍ່ໄປ? ______________

14.ຜູ້ປົກຄອງແຂວງທີ່ເປັນຊາດໂລມ ເພິ່ນເຂົ້າຂ້າງຄຶດສະຕຽນຕໍ່ຕ້ານພວກຢິວ
ຊື່ຫຍັງ? ______________________________________________

15.ກ. ເມື່ອໂປໂລກັບໄປອັນຕີໂອເຂຍເພິ່ນແວ່ໃສ? ________________________
ຂ. ສອງຄົນໃດ ຢູ່ສອນຄຶດສະຕຽນໃນບ່ອນນັ້ນຕໍ່? ______________________

16.ກ. ໂປໂລຂຽນຈົດໝາຍສອງສະບັບໃດ ໃນເວລາເດີນທາງປະກາດພະທຳເທື່ອທີສອງນີ້?
______________________________________________
ຂ. ຂຽນຈາກບ່ອນໃດ? ___________________________________
ຄ. ອີກຫຼາຍປີ ເມື່ອໂປໂລໄປປະກາດພະທຳເທື່ອທີ 3 ເພິ່ນຂຽນອີກສະບັບໃດ
ຈາກເມືອງດຽວກັນນັ້ນ? ________________________________

17.ກ. ມີສາວົກອີກຄົນໃດ ທີ່ກ່າວຄຳວິຈານເລື່ອງຈົດໝາຍທີ່ໂປໂລຂຽນ? ___________
ຂ. ເພິ່ນບອກວ່າ ສະຕິປັນຍາຂອງໂປໂລແມ່ນໃຜປະທານໃຫ້? ______________

18.ຕີໂມທຽວມີລັກສະນະຢ່າງໃດ?
(ຂຽນຢ່າງໜ້ອຍ 2 ປະການທີ່ເຫັນໃນ ພະທຳ 1 ຕມທ ຫຼື 2 ຕມທ)
ກ. ______________________________________________
ຂ. ______________________________________________

19.ກ. ແມ່ນຄຶດສະຕະຈັກໃດ ທີ່ມັກຝາກຄວາມຊ່ວຍເຫຼືອໄປໃຫ້ໂປໂລ
ຊ່ວຍປະກາດພະທຳ? ____________________________________
ຂ. ຄຶດສະຕະຈັກນັ້ນຝາກຄວາມຊ່ວຍເຫຼືອໄປເຖິງອີກຄຶດສະຕະຈັກໃດ? __________
ຄ. ເລື່ອງນີ້ ເຫັນໃນ 2 ກລທ ສອງບົດໃດ? ___________________________
ງ. ອີກ 10 ປີ, ໂປໂລ ຖືກຂັງໄວ້ໃນກຸງໂລມ ເຂົາຝາກຄວາມຊ່ວຍເຫຼືອໃຫ້ໂດຍທາງມືໃຜ?
(ໃຫ້ເລືອກ) ____ ຢາຊົນ ____ ເອປາໂຟດີໂຕ ____ ຄາລີໂອນ
ຈ. ເມື່ອຢູ່ກັບໂປໂລເພິ່ນເຈັບໜັກຈົນເກືອບ __________ (ຕື່ມຄວາມ).

20.ຂໍ້ໃດ ຕໍ່ໄປນີ້ເຫັນເປັນຄວາມຈິງຕາມທີ່ລາຍງານໃນ 1 ທຊນ? (ໃຫ້ຂຽນຄຳ "ຈິງ" ຫຼື "ບໍ່ຈິງ")
ກ. ______ ໂປໂລຖືກການລຳບາກຫຼາຍໃນເມືອງຟີລິບປອຍ ກ່ອນຈະມາເຖິງເທຊະໂລນິກ.
ຂ. ______ ມາເຖິງເທຊະໂລນິກບໍ່ຕ້ອງເຮັດການ ເພາະກິນຢູ່ກັບຄຶດສະຕຽນໃໝ່ນັ້ນ
ບໍ່ຕອ້ງເສຍ ຄ່າໃຊ້ຈ່າຍອີກດ້ວຍ.
ຄ. ______ ມາເຖິງເທຊະໂລນິກ ໂປໂລເຮັດວຽກທັງເວັນທັງຄືນ ເພື່ອຫາລ້ຽງຊີບ
ດ້ວຍຕົນເອງ.
ງ. ______ ການປະກາດພະທຳຂອງໂປໂລໃນເທຊະໂລນິກ ຄ້າຍຄືກັບພໍ່ແມ່ ທີ່ລ້ຽງດູລູກ.

21. ເພິ່ນເທດສະໜາຢ່າງໃດ? (ອີງຕາມພະທຳ 1 ທຊນ ແລະ 2 ທຊນ. ໃຫ້ຂຽນ "ຈິງ" ຫຼື "ບໍ່ຈິງ")

ກ. _______ ສອນວ່າ ຄົນໃດມາເປັນຄຼິດສະຕຽນບໍ່ມີບັນຫາຕໍ່ໄປຈັກເທື່ອ.

ຂ. _______ ສອນວ່າ ຜູ້ໃດເປັນຄຼິດສະຕຽນຈະພົບການຂົ່ມເຫັງ.

ຄ. _______ ສອນໃຫ້ລະເວັ້ນຈາກການຜິດຊາຍຍິງ.

ງ. _______ ສອນວ່າ ບໍ່ຕ້ອງເຮັດວຽກຕໍ່ໄປ ເພາະພະເຈົ້າຈະຫາໃຫ້.

ຈ. _______ ສອນໃຫ້ຫາລ້ຽງຊີບຢ່າງສັດຊື່.

22. ໃນພະທຳເທຊະໂລນິກທັງສອງສະບັບນີ້ ໂປໂລມັກເນັ້ນປະການສຳຄັນຄືເລື່ອງພະເຢຊູ.

ກ. ສອນເລື່ອງໃດ ທີ່ຍັງຢູ່ໃນອະນາຄົດ? ____________________________________

ຂ. ພີ່ນ້ອງເທຊະໂລນິກໂສກເສົ້າເພາະຫຍັງ? ________________________________

ຄ. ຜູ້ທີ່ສອນຜິດເລື່ອງນີ້ສອນວ່າຢ່າງໃດ? __________________________________

ງ. ໂປໂລສອນວ່າ ກ່ອນພະເຢຊູຈະກັບມາອີກມີໃຜຈະປາກົດມາກ່ອນ? ______________

ຈ. ໃນວັນຂອງພະຜູ້ເປັນເຈົ້າ ພະອົງຈະເຮັດຫຍັງກັບຜູ້ຊົ່ວຮ້າຍນັ້ນ? ________________

23. ຕໍ່ໄປ ເມື່ອໂປໂລໄປປະກາດພະທຳເທື່ອທີ 3 ເພິ່ນຂຽນຈົດໝາຍໄປເຖິງຄຼິດສະຕະຈັກໂກລິນໂທ. ເພິ່ນອາດ ຈະຄິດເຖິງປະຊາຊົນໃນກຸງອາແທນ ທີ່ຖືຕົວວ່າເປັນຄົນມີປັນຍາ.

ກ. ໃນ 1 ກລທ ບົດທີ 1. ຂໍ້ໃດ ທີ່ໂປໂລບອກວ່າ ປັນຍາຂອງໂລກກາຍເປັນຄວາມໂງ່? _____

ຂ. ແມ່ນເລື່ອງໃດ ທີ່ໂລກຖືວ່າເປັນເລື່ອງໂງ່, ແຕ່ຄົນທີ່ເຂົາຖືວ່າໂງ່ນັ້ນ ພະເຈົ້າຊົງໃຫ້ພົ້ນເພາະເຫັນວ່າ ເປັນອຳນາດຂອງພະເຈົ້າ? _________________________________

24. ກ. ແມ່ນໃນຈົດໝາຍສະບັບໃດ ທີ່ໂປໂລຂຽນຈາກໂກລິນໂທໄປເຖິງຄຼິດສະຕະຈັກອື່ນ ທີ່ໂປໂລບັນລະຍາຍ ເລື່ອງບາບຊົ່ວຮ້າຍໃນເມືອງໂກລິນໂທນັ້ນ? ______________________

ຂ. ບົດໃດ ໃນພະທຳນັ້ນ? _____________________________________________

25. ໃນ 1 ກລທ ບົດ 6. ໂປໂລສອນວ່າ ຮ່າງກາຍເຮົາມີຄ່າສູງໃນສາຍຕາຂອງພະເຈົ້າ.

ກ. ຂໍ້ໃດ ບອກວ່າຮ່າງກາຍມີໄວ້ສຳລັບພະເຈົ້າ? _______________________________

ຂ. ຂໍ້ໃດ ບອກວ່າເຮົາທັງຮ່າງກາຍຈະຄືນຂຶ້ນມາຈາກຕາຍ? _______________________

ຄ. ຂໍ້ໃດ ບອກວ່າຮ່າງກາຍຂອງເຮົາເປັນອະໄວຍະວະຂອງພະຄຼິດ? _________________

ງ. ຂໍ້ໃດ ບອກວ່າຮ່າງກາຍຂອງເຮົາເປັນວິຫານຂອງພະວິນຍານ? __________________